ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ

ສະບັບທີ 6, ເຫຼັ້ມທີ 2, ກໍລະກົດ - ທັນວາ 2020, ເລກທະບຽນ ISSN 2521-0653

# ແບບຈຳລອງສົມຜົນໂຄງສ້າງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາ ໃນມະຫາວິທະຍາໄລ ສຸພານຸວົງ[1]

**ສົມໃຈ ໄພຍະວົງ[2], ຄຳມີ ວ່າງ, ເກດສະລິນ ລຳໄພພັນ, ແສງດາວ ເພັດສົມບັດ, ຟອງມະນີ ອ່ອນແສງຕາວັນ**

*ພາກວິຊາຄູ ວິທະຍາສາດທຳມະຊາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ*

## ບົດຄັດຫຍໍ້

ງານວິໄຈໃນຄັ້ງນີ້ ມີຈຸດປະສົງ ເພື່ອພັດທະນາ ແລະ ທົດສອບແບບຈຳລອງສົມຜົນໂຄງສ້າງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາ ໃນມະຫາວິທະຍາໄລ ສຸພານຸວົງ ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ເປັນນັກຮຽນສອບເສັງຜ່ານມັດທະຍົມ ປີທີ 7 ພາຍໃນ 8 ແຂວງພາກເໜືອຂອງ ສປປ ລາວ ໃນສົກຮຽນ 2019 - 2020 ຈຳນວນ 160 ຄົນ ຍິງ 52 ຄົນ ໂດຍໃຊ້ວິທີການສຸ່ມແບບໂຄຕາ ແລະ ໃຫ້ໄດ້ສັດສ່ວນທີ່ເທົ່າກັນໃນແຕ່ລະແຂວງ. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນໃຊ້ແບບຟອມສອບຖາມ (Questionnaires) ເປັນການວິໄຈແບບ (Quantitative Research) ໃຊ້ເທັກນິກການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງ (Second order confirmatory Factor Analysis) ) ໂດຍໃຊ້ໂປຣແກຣມ Amos Version 21 ໂດຍມີການປະມານຄ່າພາຣາມິເຕີ ດ້ວຍວິທີການປະມານຄ່າຄວາມເປັນໄດ້ສູງສຸດ (Maximum Likelihood: ML) ຜົນການວິໄຈວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງ (Second order Confirmatory Factor Analysis: S-CFA) ສາມາດສະຫຼູບວ່າ: ໂມເດລຕົວແບບເຊີງປະຈັກ (Empirical Data) ກັບຕົວແບບທາງທິດສະດີ (ໂມເດລຕົ້ນແບບ) ມີຄວາມສອດຄ່ອງກັນ ເຊິງຜ່ານເກນການປະເມີນໂມເດລ ເຊິ່ງມີຄ່າ: ຄ່າອົງສາອິດສະຫຼະ (DF) ເທົ່າກັບ 43, ຄ່າໄຄສແຄສຳພັນ $\chi^2/df$ ເທົ່າກັບ 1.891, ຄ່າວັດສະນີວັດຄວາມກົມກືນ (GFI) ເທົ່າກັບ 0.921, ຄ່າດັສະນີວັດຄວາມສອດຄ່ອງກົມກືນປຽບທຽບ (CFI) ເທົ່າກັບ 0.912, ດັດສະນີຮາກທີ່ສອງຂອງຄ່າສະເລ່ຍກຳລັງສອງຂອງສ່ວນທີ່ເຫຼືອ (RMR) ເທົ່າກັບ 0.035, ດັດສະນີຄວາມຄາດເຄື່ອນໃນການປະມານຄ່າພາລາມິເຕີ (RMSEA) ເທົ່າກັບ 0.075.

**ຄຳສຳຄັນ:** ການຕັດສິນໃຈເລືອກເຂົ້າສຶກສາຕໍ່, ແບບຈຳລອງສົມຜົນໂຄງສ້າງ, ມະຫາວິທະຍາໄລ ສຸພານຸວົງ

---

[1] ***ການອ້າງອີງພາສາລາວ***

ສົມໃຈ ໄພຍະວົງ ແລະ ຄະນະ. (2020). **ແບບຈຳລອງສົມຜົນໂຄງສ້າງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາ ໃນມະຫາວິທະຍາໄລ ສຸພານຸວົງ**, *ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ສະບັບທີ: 6, ເຫຼັ້ມ 2, ໜ້າທີ: 95-103*

[2] ***ຕິດຕໍ່ພົວພັນ:***

ສົມໃຈ ໄພຍະວົງ, ພາກວິຊາຄູ ວິທະຍາສາດທຳມະຊາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ

Tel: +856 20 29301212, E-mail: somchay@su.edu.la

# A Structural Equation Model of Factors Influencing Students' Decisions in Choosing Souphanouvong University

**Somechay PHAIGNAVONG [3], Khammee VANG, Ketsalinh LAMPHAIPHANH, Sengdow PHATSOMBATH, Fongmany ONSENGTAVANH**

*Department of Science Teacher, Faculty of Education, Souphanouvong University.*

**ABSTRACT**

The purpose of this research was to develop and test the Structural Equation Model of factor influencing students' decisions in choosing Souphanouvong University. The key participants were students who passed or completed year7 in high schools in 8 northern provinces of Lao PDR and were selected as the sample, academic year 2019-2020. There were 160 students including 52 females and quota method was used in order to obtain equal proportions in each province. The tool applied in this study was the questionnaire as it was a quantitative research using Second order confirmatory Factor Analysis plus program Amos version 21 with Parameter estimation and the estimation of Maximum Likelihood Value. The result of Second order confirmatory Factor Analysis could be concluded the developed structure equation model was well consistent with the empirical data by the goodness of fit indices of Degree of freedom (DF) = 43, $\chi^2/df$ =1.891, GFI = 0.921, CFI = 0.912, RMR = 0.035, RMSEA= 0.075.

**Keywords:** Students'decisions, SEM, Souphanouvong University

[3] **Correspondence:**
Somchay PHAIGNAVONG, Department of Science Teacher, Faculty of Education, Souphanouvong University. Tel: +856 20 29301212, E-mail: somchay@su.edu.la

## 1. ພາກສະເໜີ

ການສຶກສາຖືເປັນສ່ວນໜຶ່ງໃນການພັດທະນາຊັບພະຍາກອນມະນຸດ ພົນລະເມືອງລາວສ່ວນໃຫຍ່ໃຫ້ຄວາມສຳຄັນ ແລະ ໃຫ້ຄວາມສົນໃຈໃນການສຶກສານັບມືນັບກວ້າງຂວາງເປັນວົງກ້ວາງລວມເຖິງລັດຖະບານໄດ້ມີການສົ່ງເສີມ ແລະ ສະໜັບສະໜູນໃຫ້ພົນລະເມືອງລາວທຸກຄົນຫັນມາໃສ່ໃຈໃນເລື່ອງນີ້ ເພາະຖືເປັນພື້ນຖານແຫ່ງຄວາມສຳເລັດໃນຊີວິດ ແລະ ສາມາດນຳມາໃຊ້ໃນການປະກອບອາຊີບເພື່ອລ້ຽງດູຕົນເອງ ແລະ ຄອບຄົວໄດ້ໃນອະນາຄົດ.

ເພື່ອສະໜອງການສຶກສາຂັ້ນພື້ນຖານໃຫ້ສອດຄ່ອງກັບຄວາມຕ້ອງການຂອງການຂະຫຍາຍຕົວຂອງເສດຖະກິ -ສັງຄົມໃນແຕ່ລະໄລຍະ ພ້ອມທັງສາມາດເຊື່ອມ ໂຍງ ແລະ ແຂ່ງຂັ້ນກັບກຳລັງແຮງງານໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ ຫຼື ASIAN ໄດ້ຄາດໝາຍວ່າ ນັກຮຽນທີ່ເສັງຈົບມັດທະຍົມສຶກສາປີທີ 7 ທັງໝົດໃຫ້ໄດ້ເຂົ້າຮຽນຕໍ່ໃນສະຖາບັນອາຊີວະສຶກສາ ແລະ ເຂົ້າຮຽນຕໍ່ໃນສະຖາບັນການສຶກສາຊັ້ນສູງທັງໝົດ ທັງພາກລັດ ແລະ ເອກະຊົນ ແລະ ອັດຕາແມ່ຍິງເຂົ້າຮຽນໃນການສຶກສາຊັ້ນສູງໃຫ້ໄດ້ 45% ຂອງຈຳນວນນັກຮຽນທັງໝົດຢູ່ສະຖາບັນການສຶກສາຊັ້ນສູງ (ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ 5 (2016-2020).

ມະຫາວິທະຍາໄລ ສຸພານຸວົງ(Suphanouvong University) ຂຽນຫຍໍ້ ມສ (SU) ໄດ້ຮັບການສ້າງຕັ້ງຂຶ້ນດຳລັດຂອງນາຍຍົກລັດທະມົນຕີ ສະບັບເລກທີ 169 ຫ/ນຍ, ລົງວັນທີ 4 ພະຈິກ 2003 ແລະ ໄດ້ໄຂສົກສຶກສາຄັ້ງປະຖົມມະລຶກໃນວັນທີ 5 ພະຈິກ 2003 ເປັນຕົ້ນມາ ຈົນເຖິງປັດຈຸບັນ .

ສັງລວມແລ້ວຕະຫຼອດ ໄລຍະທີ່ຜ່ານມາ ມະຫາວິທະຍາໄລສຸພານຸວົງໄດ້ຮັບການຂະຫຍາຍຕົວທາງດ້ານປະລິມານ ເຊິ່ງສະແດງໃຫ້ເຫັນວ່າ :ພາກວິຊາ, ສາຂາ ແລະ ຄູສອນເພີ່ມຂຶ້ນ ແຕ່ວ່າຈຳນວນນັກສຶກສາພັດຫຼຸດລົງ ທັງນີ້ກໍ່ເນື່ອງຈາກວ່າລັດຖະບານໄດ້ມີການປະຕິຮູບລະບົບການສຶກສາດ້ວຍການລົບລ້າງງສາຍພິເສດ ແລະ ປະກາດຜົນການສອບເສັງລະດັບຊາດຫຼ້າຊ້າ ເຮັດໃຫ້ຈຳນວນນັກສຶກສາຜູ້ທີ່ສອບເສັງໄດ້ ພັດເລືອກໄປຮຽນຢູ່ມະຫາວິທະຍາໄລແຫ່ງອື່ນໆ ແລະ ສະຖາບັນອື່ນທັງພາຍໃນ ແລະ ຕ່າງປະເທດ.

ສິ່ງໜຶ່ງທີ່ເຫັນໄດ້ຢ່າງກະຈາງແຈ້ງຄື: ການສັງເກດໂດຍລວມໃນໄລຍະສົກສຶກສາ 2015 ເຖິງປະຈຸບັນ ມີຈຳນວນນັກຮຽນທີ່ສອບເສັງຈົບມັດທະຍົມປີທີ 7 ພາຍໃນ 8 ແຂວງພາກເໜືອ ແຕ່ໃນນັ້ນມີຈຳນວນຫຼວງຫຼາຍບໍ່ມາເສັງເຂົ້າສຶກສາຕໍ່ໃນະຫາວິທະຍາໄລ ສຸພານຸວົງ, ຈຳນວນໜຶ່ງອອກໄປສຶກສາຕໍ່ຕ່າງປະເທດໃກ້ຄຽງ,ຈຳນວນສອບເສັງໄດ້ແຕ່ບໍ່ມາຮຽນ, ມີຈຳນວນໜຶ່ງປ່ຽນສາຍຮຽນ, ມີຈຳນວນໜຶ່ງໂຈະການຮຽນ, ມີຈຳນວນໜຶ່ງປະລະການຮຽນ ແລະ ຍັງມີຈຳນວນໜຶ່ງໄດ້ສິ້ນສຸດຄວາມເປັນສະຖານະພາບນັກສຶກສາ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:ຈາກສະຖິຕິຂໍ້ມູນຜົນການສອບເສັງເຂົ້າມະຫາວິທະຍາໄລ ສຸພານຸວົງ ແລະ ສະຖິຕິຂອງຜູ້ທີ່ລົງທະບຽນຮຽນຕົວຈິງໃນມະຫາວິທະຍາໄລສຸພານຸວົງ ໃນແຕ່ລະສົກສຶກສາເຫັນວ່າ ສົກສຶກສາ 2015-2016 ມີຜູ້ສອບເສັງຜ່ານເຂົ້າສຶກສາຕໍ່ ທີ່ມະຫາວິທະຍາໄລ ສຸພານຸວົງ ທັງໝົດຈຳນວນ 1082 ຄົນ ແຕ່ມາລົງທະບຽນຮຽນຕົວຈິງ ຈຳນວນ 835 ຄົນ (ຍິງ 342 ຄົນ ກວມເອົາ 40.96%) ແຕ່ບໍ່ມາລົງທະບຽນຮຽນກວມເອົາ 22.83%.

ຈົນມາຮອດສົກສຶກສາ 2019-2020 ມີຜູ້ສອບເສັງຜ່ານເຂົ້າສຶກສາຕໍ່ທີ່ມະຫາວິທະຍາໄລ ສຸພານຸວົງ ທັງໝົດຈຳນວນ 1,326 ຄົນ ແຕ່ມາລົງທະບຽນຮຽນຕົວຈິງຈຳນວນ 829 ຄົນ (ຍິງ 393 ຄົນ ກວມເອົາ 47.41%) ແຕ່ບໍ່ມາລົງທະບຽນຮຽນກວມເອົາ 62.52%. (ໜັງສືລາຍງານສະຖິຕິນັກສອບເສັງ ສົກສຶກສາ ແຕ່ປີ 2015-2019 ສະບັບເລກທີ 441/ມສ ວກ)

ຈະເຫັນໄດ້ວ່າການສຶກສາໃນແຕ່ລະປີ ມີຜູ້ທີ່ຕ້ອງການເຂົ້າສຶກສາຕໍ່ລະດັບປະລິນຍາຕີທີ່ມະຫາວິທະຍາໄລ ສຸພານຸວົງ ແຕ່ເຖິງຢ່າງໃດກໍ່ຕາມກໍ່

ຍັງມີນັກຮຽນຈຳນວນໜຶ່ງ ທີ່ສອບເສັງໄດ້ແຕ່ບໍ່ມາຮຽນ (ສະຫຼະສິດ) ເປັນຈຳນວນຫຼາຍຂຶ້ນເລື້ອຍໆ. ເຊິ່ງຈາກການເບິ່ງຕົວເລກສະຖິຕິນັກສຶກສາແລ້ວ ກໍ່ມີຈຳນວນນັກສຶກສາຫຼຸດລົງໃນທຸກປີ ແລະ ບາງຄັ້ງກໍ່ຍັງມີແນວໂນ້ມຈະຫຼຸດລົງອີກ **(ເລີ່ມຈາກສົກສຶກສາ 2015-2020 ມີນັກສຶກສາຫຼຸດລົງ 29.76%)** ທີ່ບໍ່ໄດ້ຕາມແຜນຍຸດທະສາດຂອງມະຫາວິທະຍາໄລສຸພານຸວົງທີ່ໄດ້ຄາດໝາຍໄວ ເພາະວ່າໃນປະຈຸບັນນັກສຶກສາທົ່ວມະຫາວິທະຍາໄລ ມີທັງໝົດພຽງແຕ່ 3,110 ຄົນ ຍິງ 1,416 ຄົນ (ກວມເອົາ 45.5%) ແຕ່ຄາດໝາຍຂອງມະຫາວິທະຍາໄລ ສຸພານຸວົງແມ່ນຮອດປີ 2020 ຈະຕ້ອງມີຈຳນວນນັກສຶກສາທັງໝົດ 6,840 ຄົນ, ນັກສຶກສາຍິງກວມເອົາ 40% ເຊິ່ງຕົວເລກຄວາມເປັນຈິງຂອງນັກສຶກສາທົ່ວມະຫາວິທະຍາໄລ ສຸພານຸວົງໃນປະຈຸບັນໄດ້ມີຄວາມຄາດເຄື່ອນຈາກແຜນຍຸດທະສາດຈຳນວນ 3,730 ຄົນ (ກວມເອົາ 54.53%)

ເຊິ່ງຄວາມຕ້ອງການເລືອກເຂົ້າສຶກສາຕໍ່ຂອງແຕ່ລະຄົນຈະແຕກຕ່າງກັນ ຜູ້ວິໄຈຈຶ່ງສົນໃຈ ວ່າມີປັດໄຈໃດແດ່ທີ່ສົ່ງຜົນຕໍ່ທີ່ສອບເສັງຜ່ານມັດທະຍົມສຶກສາປີທີ 7 ພາຍໃນ 8 ແຂວງພາກເໜືອຂອງ ສປປ ລາວ ທີ່ຈະຕັດສິນໃຈເຂົ້າສຶກສາຕໍ່ທີ່ ມະຫາວິທະຍາໄລ ສຸພານຸວົງ ແຫ່ງນີ້. ສະນັ້ນຈາກບັນຫາທີ່ໄດ້ກ່າວຂ້າງເທິງ ຜູ້ວິໄຈຈຶ່ງສົນໃຈສຶກສາໃນຫົວຂໍ້ :**ແບບຈຳລອງສົມຜົນໂຄງສ້າງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາ ໃນມະຫາວິທະຍາໄລ ສຸພານຸວົງ** ເພື່ອນຳໄປສູ່ແນວທາງໃນການກຳນົດນະໂຍບາຍ, ການວາງແຜນໃຫ້ມີປະສິດທິພາບ ແລະ ສາມາດນຳຂໍ້ມູນທີ່ໄດ້ມາເປັນແນວທາງໃນການແນະແນວເພື່ອໃຫ້ນັກຮຽນເກີດຄວາມສົນໃຈ ແລະ ຕັດສິນໃຈເລືອກເຂົ້າສຶກສາຕໍ່ໃຫ້ຫຼາຍຂຶ້ນ. ສິ່ງສຳຄັນແມ່ນການພັດທະນາການວາງແຜນລະບົບການສຶກສາ ແລະ ການບໍລິຫານຈັດການພາຍໃນມະຫາວິທະຍາໄລ ສຸພານຸວົງ ໃຫ້ບັນລຸຕາມເປົ້າໝາຍໃຫ້ສາມາດບໍລິການຕາມຄວາມຕ້ອງການຂອງນັກສຶກສາ ແລະ ມາດຕະຖານສາກົນຕໍ່ໄປ .

**ຈຸດປະສົງຂອງການວິໄຈ**

ເພື່ອພັດທະນາ ແລະ ທົດສອບແບບຈຳລອງສົມຜົນໂຄງສ້າງປັດໄຈທີ່ມີອິດທິພົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາ ໃນມະຫາວິທະຍາໄລ ສຸພານຸວົງ

**ກອບແນວຄວາມຄິດການວິໄຈ**




**ພາບທີ 1**: ກອບແນວຄວາມຄິດການວິໄຈ

**2. ວິທີການຄົ້ນຄວ້າ**

**2.1 ເຄື່ອງມືໃນການເກັບຂໍ້ມູນ**

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ແມ່ນໃຊ້ແບບຟອມສອບຖາມ (Questionnaires) ກ່ຽວກັບ ປັດໄຈການຕັດສິນໃຈເລືອກເຂົ້າສຶກສາຕໍ່ທີ ມະຫາວິທະຍາໄລ ສຸພານຸວົງ ເຊິ່ງປະກອບມີທັງໝົດ 6 ປັດໄຈ ຄື: ປັດໄຈດ້ານເງື່ອນໄຂພື້ນຖານຂອງນັກຮຽນ, ປັດໄຈດ້ານສະພາບຂອງມະຫາວິທະຍາໄລ ສຸພານຸວົງ, ປັດໄຈດ້ານຄວາມຄວາມສາມາດສ່ວນບຸກຄົນ, ປັດໄຈດ້ານຄວາມຄາດຫວັງຂອງຜູ້ປົກຄອງ, ປັດໄຈດ້ານອິດທິພົນພາຍໃນທີ່ກ່ຽວຂ້ອງກັບການຕັດສິນໃຈສຶກສາຕໍ່, ປັດໄຈດ້ານລະບົບການຄັດເລືອກ ແລະ ລາຍງານຜົນ ເພື່ອກວດສອບຫາຄວາມທ່ຽງຕາມເນື້ອໃນ, ໂຄງສ້າງ ແລະ ພາສາ ຈາກນັ້ນເລືອກຂໍ້ຄຳຖາມທີ່ມີດັດສະນີສອດຄ່ອງ (Index of Objective Congruence : IOC) ທີ່ມີຄ່າຫຼາຍກວ່າ ຫຼື ເທົ່າກັບ 0.5 ມາໃຊ້ໃນແບບສອບຖາມ ແລະ ແບບສຳພາດ. ຈາກນັ້ນນຳມາປັບປຸງອີກຄັ້ງຕາມເກນ ແລະ ຕາມຄຳແນະນຳຂອງຜູ້ຊ່ຽວຊານ ທົດສອບເຄື່ອງມື ໂດຍນຳໄປ (Try out) ກັບກຸ່ມຜູ້ໃຫ້ຂໍ້ມູນໂດຍບໍ່ແມ່ນກຸ່ມຕົວຢ່າງໃນງານວິໄຈ ເພື່ອສຶກສາຜົນການໃຊ້ ແລະ ນຳມາປັບປຸງສຳນວນພາສາໃຫ້ມີຄວາມສົມບູນຍິ່ງຂຶ້ນ. ຈາກນັ້ນຊອກຫາຄວາມເຊື່ອໝັ້

ນຂອງແບບສອບຖາມ (Reliability) ການກວດສອບຄ່າ (Cronbach's Alpha) ຄວນມີຄ່າຕັ້ງແຕ່ 0.7 ຂຶ້ນໄປ (ອີງຕາມທິດສະດີຂອງ ດຣ Thanut Wongsaichue )

**2.2 ວິທີການຄົ້ນຄວ້າ**

ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ເປັນນັກຮຽນສອບເສັງຜ່ານມັດທະຍົມ ປີທີ 7 ພາຍໃນ 8 ແຂວງພາກເໜືອຂອງ ສປປ ລາວ ໃນສົກຮຽນ 2019 - 2020 ຈຳນວນ 160 ຄົນ ຍິງ 52 ຄົນ ໂດຍໃຊ້ວິທີການສຸ່ມແບບໂຄຕາ ແລະ ໃຫ້ໄດ້ສັດສ່ວນທີ່ເທົ່າກັນໃນແຕ່ລະແຂວງ.

**2.3 ວິທີການວິເຄາະຂໍ້ມູນ**

ການວິໄຈໃນຄັ້ງນີ້ເປັນການວິໄຈແບບ (Quantitative Research) ໃຊ້ເທັກນິກການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງ (Second order confirmatory Factor Analysis) ເພື່ອແບບຈຳລອງສົມຜົນໂຄງສ້າງການຕັດສິນໃຈເລືອກເຂົ້າສຶກສາຕໍ່ທີ່ມະຫາວິທະຍາໄລ ສຸພານຸວົງ ການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໂດຍໃຊ້ສະຖິຕິພັນລະນາ (Descriptive Statistics) ເພື່ອອະທິບາຍຂໍ້ມູນຂອງຜູ້ຕອບແບບສອບຖາມໄດ້ແກ່ ຄວາມຖີ່ (Frequency) ແລະ ສ່ວນຮ້ອຍ (Percentage) ແລະ ການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງ (Second order Confirmatory Factor Analysis: S-CFA) ໂດຍໃຊ້ໂປຣແກຣມ Amos Version 21 ໂດຍມີການປະມານຄ່າພາຣາມິເຕີດ້ວຍວິທີການປະມານຄ່າຄວາມເປັນໄດ້ສູງສຸດ (Maximum Likelihood: ML) ເພື່ອກວດສອບຄວາມທ່ຽງຕົງເຊີງໂຄງສ້າງ ດ້ວຍການພິຈາລະນາຄວາມສອດຄ່ອງຂອງໂມເດລ ຕາມສົມຜົນໂຄງສ້າງຕາມທິດສະດີກັບຂໍ້ມູນເຊີງປະຈັກ (Empirical Data) ໂດຍພິຈາລະນາຄ່າສະຖິຕິວັດລະດັບຄວາມສອດຄ່ອງ ໄດ້ແກ່: ຄ່າໄຄສ໌ແຄ ($\chi^2$), ຄ່າໄຄສ໌ແຄສຳພັນ ($\chi^2/df$), ຄ່າດັດສະນີວັດລະດັບຄວາມກົມກືນ (Goodness of Fit Index: GFI) ຄ່າດັດສະນີວັດລະດັບຄວາມສອດ ຄ່ອງກົມກືນປຽບທຽບ (Comparative Fit Idex:CFI) ຄ່າດັດສະນີຮາກກຳລັງສອງສະເລ່ຍຂອງເສດເຫຼືອ (Root Mean Square Residual: RMR) ແລະ ຄ່າຮາກຂອງຄ່າສະເລ່ຍກຳລັງສອງຂອງຄ່າຄວາມຄາດເຄື່ອນໂດຍປະມານ (Root Mean Square Error of Approximate: RMSEA)

**3. ຜົນໄດ້ຮັບ**

**ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ**

ຜົນການວິເຄາະຂໍ້ມູນທົ່ວໄປຂອງນັກຮຽນທີ່ຕອບແບບສອບຖາມຈຳນວນ 160 ຄົນ ຜົນວິເຄາະຂໍ້ມູນພົບວ່າ: ຜູ້ຕອບແບບສອບຖາມສ່ວນໃຫ່ຍເປັນເພດຊາຍຮ້ອຍລະ 67.5% ເພດຍິງຮ້ອຍລະ 32.5% ຜູ້ສອບແບບສອບຖາມໂດຍສ່ວນໃຫ່ຍມີອາຍຸ 19 ປີ ກວມເອົາ 38.1% ແລະ ສ່ວນນ້ອຍສຸດອາຍຸ 23 ປີ ກວມເອົາ 1.3% ໂດຍຜູ້ຕອບແບບສອບຖາມແມ່ນມາຈາກຫຼາຍທ້ອງຖິ່ນເຊັ່ນ: ແຂວງຫຼວງພະບາງ ຈຳນວນ 42 ຄົນ ກວມເອົາ 26.25% ແຂວງໄຊຍະບູລີ ຈຳນວນ 22 ຄົນ ກວມເອົາ 13.75% ແຂວງອຸດົມໄຊ ຈຳນວນ 26 ຄົນ ກວມເອົາ 16.25% ແຂວງຫຼວງນ້ຳທາ ຈຳນວນ 14 ຄົນ ກວມເອົາ 8.75% ແຂວງບໍ່ແກ້ວ ຈຳນວນ 11 ຄົນ ກວມເອົາ 6.875% ແຂວງ ຜົ້ງສາລີ ຈຳນວນ 15 ຄົນ ກວມເອົາ 9.375% ແຂວງຫົວພັນ ຈຳນວນ 9 ຄົນ ກວມເອົາ 5.625% ແຂວງຊຽງຂວາງ ຈຳນວນ 21 ຄົນ ກວມເອົາ 13.125%

**ຜົນການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງການຕັດສິນໃຈເລືອກເຂົ້າສຶກສາຕໍ່ທີ່ ມະຫາວິ ທະຍາໄລ ສຸພານຸວົງ**

ການຕັດສິນໃຈເລືອກເຂົ້າສຶກສາຕໍ່ທີ່ມະຫາວິທະຍາໄລ ສຸພານຸວົງທັງ 5 ອົງປະກອບມີນ້ຳໜັກອົງປະກອບລະຫວ່າງ 0.313-0.868 ໂດຍລຽງລຳດັບຈາກຫຼາຍໄປຫາໜ້ອຍທີ່ມີໄລຍະສຳຄັນທາງສະຖິຕິຄື: ປັດໄຈດ້ານຄວາມສາມາດສ່ວນບຸກຄົນ, ປັດໄຈດ້ານສະພາບຂອງມະຫາວິທະຍາໄລ, ປັດໄຈດ້ານຄວາມຄາດຫວັງຂອງຜູ້ປົກຄອງ, ປັດໄຈດ້ານລະບົບການຄັດເລືອກ ແລະ ປັດໄຈດ້ານເງື່ອນໄຂພື້ນຖານດັ່ງລາຍລະອຽດສະແດງດັ່ງຕາຕະລາງ 1:

**ຕາຕະລາງ1**: ສະແດງຄ່ານ້ຳໜັກອົງປະກອບ ແລະ ຄ່າສຳປະສິດສະຫະສຳພັນພະຫຸຄູນ

| ຕົວປ່ຽນ | ນ້ຳໜັກອົງປະກອບ | $R^2$ |
|---|---|---|
| ປັດໄຈດ້ານຄວາມສາມາດສ່ວນບຸກຄົນ | 0.868 | 0.753 |
| ປັດໄຈດ້ານສະພາບຂອງມະຫາວິທະຍາໄລ | 0.839 | 0.703 |
| ປັດໄຈດ້ານຄວາມຄາດຫວັງຂອງຜູ້ປົກຄອງ | 0.587 | 0.344 |
| ປັດໄຈດ້ານລະບົບການຄັດເລືອກ | 0.336 | 0.113 |
| ປັດໄຈດ້ານເງື່ອນໄຂພື້ນຖານ | 0.313 | 0.098 |
| $\chi^2 = 81.294, df = 43, \chi^2/df = 1.891, GFI = 0.921, CFI = 0.912, RMR = 0.035, RMSEA = 0.07$ | | |

ຜົນການວິເຄາະອົງປະກອບເຊີງຢືນຢັນອັນດັບທີ່ສອງ (Second order Confirmatory Factor Analysis: S-CFA) ເພື່ອປະເມີນຄວາມເໝາະສົມ ຫຼືສອດຄ່ອງກົມກືນ (Assessment of Model Fit) ຂອງຂໍ້ມູນເຊີງປະຈັກ (Empirical Data) ກັບໂມເດລ (Model)




Figure: Structureal Equation Model

ຈາກພາບໂມເດລ ແລະ ຕາຕະລາງ 1 ແລະ ຕາຕະລາງ2 ພົບວ່າ: ໂມເດລມີຄວາມສອດຄ່ອງກັບຂໍ້ມູນເຊີງປະຈັກ (Empirical Data) ໂດຍພິຈາລະນາ 6 ຄ່າຕາມລຳດັບ: ຄ່າອົງສາອິດສະຫຼະ (DF) ເທົ່າກັບ 43, ຄ່າໄຄສແຄສຳພັນ $\chi^2/df$ ມີຄ່າເທົ່າກັບ 1.891 (ຕາມມາດຕະຖານຄວນຈະມີຄ່ານ້ອຍກວ່າ 2.00), ຄ່າວັດສະນີວັດຄວາມກົມກືນ (GFI) ມີຄ່າເທົ່າກັບ 0.921 (ຕາມມາດຕະຖານຄວນຈະມີຄ່າສູງກວ່າ 0.90), ຄ່າດັດສະນີວັດຄວາມສອດຄ່ອງກົມກືນປຽບທຽບ (CFI) ມີຄ່າເທົ່າກັບ 0.912 (ຕາມ

ມາດຕະຖານຄວນຈະມີຄ່າສູງກວ່າ 0.90), ດັດສະນີຮາກທີ່ສອງຂອງຄ່າສະເລ່ຍກຳລັງສອງຂອງສ່ວນທີ່ເຫຼືອ (RMR) ມີຄ່າເທົ່າກັບ0.035 (ຕາມມາດຕະຖານຄວນຈະມີຄ່ານ້ອຍກວ່າ 0.08), ດັດສະນີຄວາມຄາດເຄື່ອນໃນການປະມານຄ່າພາລາມິເຕີ (RMSEA) ມີຄ່າເທົ່າກັບ 0.075 (ຕາມມາດຕະຖານຄວນຈະມີຄ່ານ້ອຍກວ່າ 0.08).

**4. ວິພາກຜົນ**

ດ້ານສະພາບເງື່ອນໄຂເບື້ອງຕົ້ນ ກໍ່ເປັນປັດໃຈໜຶ່ງທີ່ສົ່ງຜົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາຕໍ່ມະຫາວິທະຍາໄລ ສຸພານຸວົງ ອັນເນື່ອງມາຈາກ ໄລຍະທາງຈາກບ້ານຫາມະຫາວິທະຍາໄລ ຍັງໄກສຳລັບຜູ້ທີ່ຢູ່ເຂດຫ່າງໄກ, ລາຍໄດ້ຂອງຄອບຄົວຍັງຕ່ຳ, ສ່ວນຫຼາຍພໍ່ແມ່ຜູ້ປົກຄອງເປັນຊາວສວນ - ຊາວນາ, ລະດັບການສຶກສາຍັງຕ່ຳ ທັງໝົດນີ້ຈຶ່ງສົ່ງຕໍ່ນັກສຶກສາຕັດສິນໃຈເລືອກເຂົ້າສຶກສາຕໍ່ໃນມະຫາວິທະຍາໄລ ສຸພານຸວົງ ເຊິ່ງສອດຄ່ອງກັບງານວິໄຈຂອງ (Pimpa 2014) ໄດ້ສະແດງໃຫ້ເຫັນຢ່າງກະຈ່າງແຈ້ງວ່າ: ເງື່ອນໄຂພື້ນຖານທາງຄອບ ຄົວເປັນປັດໃຈທີ່ມີອິດທິພົນຫຼັກໃນການເລືອກເຂົ້າສຶກສາຕໍ່ ໃນມະຫາວິທະຍາໄລໃນປະເທດໄທເພາະຖ້າຄອບຄົວທີ່ມີເງື່ອນໄຂຄົບຖ້ວນກໍ່ສາມາດສະໜອງທຶນຮອນໃຫ້ລູກຫຼານໄດ້ ແຕ່ເງື່ອນໄຂເສດຖະກິດຄອບຄົວບໍ່ພ້ອມກໍ່ຈະບໍ່ສາມາດສົ່ງລູກຫຼານເຂົ້າສຶກສາຕໍ່ລະດັບສູງ ດ້ານສະພາບທົ່ວໄປຂອງມະຫາວິທະຍາໄລ ເປັນປັດໄຈທີ່ສຳຄັນຕໍ່ການສຶກສາຕໍ່ໃນລະດັບສູງຂອງນັກສຶກສາ ເນື່ອງຈາກສະພາບທົ່ວໄປຂອງມະຫາວິທະຍາໄລສະຖາບັນການສຶກສາເປັນສິ່ງທີ່ສຳຄັນຕໍ່ການສຶກສາຕໍ່ໃນລະດັບສູງຂອງນັກສຶກສາ ເນື່ອງຈາກວ່າ: ເປັນມະຫາວິທະຍາໄລຂອງລັດ, ຄວາມຊື່ສຽງ, ເປີດສອນຫຼາກຫຼາຍສາຂາວິຊາ, ເປັນວິຊາຮຽນທີ່ໂດດເດັ່ນ, ມີການຈັດການຮຽນ - ການສອນທີ່ໂດດເດັ່ນ, ມີຄູອາຈານທີ່ເກັ່ງ ແລະ ຊ່ຽວຊານດ້ານວິຊາສະເພາະ, ມີສະພາບແວດລ້ອມທີ່ສວຍຊຶດງົດງາມ, ມີຄວາມສະດວກທາງດ້ານທີ່ພັກອາໄສສົ່ງຜົນເຮັດໃຫ້ນັກສຶກສາຕັດສິນໃຈເລືອກເຂົ້າສຶກສາຕໍ່ລະດັບປະລິນຍາຕີ ທີ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ແຫ່ງນີ້ ເຊິ່ງສອດ ຄ່ອງກັບງານວິໄຈຂອງຂອງ (ເອກສິດທິສະນາມທອງ, ພສ. 2547) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາຕໍ່ສະຖາບັນອຸດົມສຶກສາເອກະຊົນ ໃນເຂດກຸງເທບມະຫານະຄອນ ຜົນການສຶກສາພົບວ່າ: ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາຕໍ່ສະຖາບັນອຸດົມສຶກສາເອກະຊົນ ໃນເຂດກຸງເທບມະຫານະຄອນ ນັ້ນໄດ້ແກ່: ພາບລັກສະນະທາງດ້ານຄວາມຊື່ສຽງທາງວິຊາການຂອງສະຖາບັນ, ການເປັນສະຖາບັນທີ່ມີຄວາມທັນສະໄໝທາງດ້ານສື່ການຈັດການຮຽນ - ການສອນ ແລະ ເຕັກໂນໂລຢີທາງດ້ານຄອມພິວເຕີ ແລະ ທັງສາມາດຮອງຮັບນັກສຶກສາໄດ້ຢ່າງພຽງພໍ.

ດ້ານຄວາມສາມາດສ່ວນບຸກຄົນ ສົ່ງຜົນຕໍ່ການຕັດສິນໃຈທາງບວກທີ່ເລືອກເຂົ້າສຶກສາຕໍ່ມະຫາວິທະຍາໄລສຸພານຸວົງ ເຊິ່ງ ດ້ານຄວາມສາມາດສ່ວນບຸກຄົນ ເປັນປັດໄຈໜຶ່ງທີ່ມີຄວາມເໝາະສົມ ເຮັດໃຫ້ນັກສຶກສາມີການຕັດສິນໃຈເລືອກຮຽນຕໍ່ຕາມຄວາມຖະນັດຂອງຕົນເອງເໝາະສົມກັບລະດັບການຮຽນຮູ້ຂອງຕົນເອງໃນລະດັບສາມັນສຶກສາ ເຊິ່ງສອດຄ່ອງກັບງານວິໄຈຂອງ (Baharum 2002) ສະແດງໃຫ້ເຫັນວ່າ: ການເລືອກເຂົ້າສຶກສາຕໍ່ຂອງນັກສຶກສາໃນແຕ່ລະຄົນແມ່ນ ສາຂາວິຊາທີ່ເປີດສອນຖືກກັບຄວາມສາມາດຂອງຕົນ, ຄຸນນະພາບຂອງການສຶກສາພາຍໃນມະຫາວິທະຍາໄລ, ການບໍລິຫານທີ່ມີມາດຕະຖານ, ອຸປະກອນ ແລະ ຄວາມສະດວກພາຍໃນມະຫາວິທະຍາໄລ ແລະ ໄລຍະທາງການເດີນທາງສູ່ມະຫາວິທະຍາໄລ.

ດ້ານຄວາມຄາດຫວັງຂອງຜູ້ປົກຄອງ ຫຼື ນັກສຶກສາ ສົ່ງຜົນໃນທິດທາງບວກຕໍ່ການຕັດສິນໃຈເລືອກເຂົ້າສຶກສາຕໍ່ມະຫາວິທະຍາໄລ ສຸພານຸວົງ ເຊິ່ງມີຄວາມຄາດຫວັງເປັນສິ່ງທີ່ສຳຄັນຕໍ່ການສຶກສາຕໍ່ໃນລະດັບສູງຂອງນັກສຶກສາ ແລະ ຜູ້ປົກຄອງ ເພາະວ່າ: ການຄາດຫວັງສິ່ງທີ່ຕອບແທນເປັນຕົ້ນວ່າ ເມື່ອຮຽນຈົບໃນອານາຄົດແລ້ວຫາວຽກໄດ້ງ່າຍທີ່ເໝາະສົມກັບຕົນເອງ, ຄາດຫວັງເລື່ອງເງິນເດືອນຕອບແທນ, ຄວາມກ້າວໜ້າ ເຊິ່ງສອດຄ່ອງກັບງານວິໄຈຂອງ (yusif et ak .(2008)) ໄດ້ເນັ້ນໃຫ້ເຫັນວ່າ: ຄວາມ

ຄາດຫວັງຂອງພໍ່ແມ່ທີ່ມີຕໍ່ລູກພາຍຫຼັງຈົບຈາກມະຫາວິທະຍາໄລ ປັດໄຈທີ່ສໍາຄັນແມ່ນ ການຊອກວຽກເຮັດງານທໍາໃນອານາຄົດຂອງລູກ ແລະ ມີອານາຄົດທີ່ດີຂອງລູກ.

## 5. ສະຫຼຸບຜົນ

ຈຸດປະສົງງານວິໄຈຄັ້ງນີ້ແມ່ນໄດ້ໃຫ້ປະໂຫຍດ ແລະ ແນວທາງໃນປະຕິບັດໃຫ້ແກ່ມະຫາວິທະຍາໄລສຸພານຸວົງ ທີ່ກ່ຽວຂ້ອງກັບການເລືອກເຂົ້າສຶກສາຕໍ່ໃນມະຫາວິທະຍາໄລ ຂອງນັກສຶກສາ. ຜົນການສຶກສາຍັງສາມາດໃຫ້ປະໂຫຍດແກ່ມະຫາວິທະຍາໄລ ສຸພານຸວົງໃນດ້ານກົນລະຍຸດ, ການດຶງດູດ ແລະ ຄວາມສົນໃຈໃຫ້ກັບຜູ້ທີ່ຕ້ອງການ ຈະເຂົ້າສຶກສາຕໍ່ ທີ່ມະຫາວິທະຍາໄລ ສຸພານຸວົງໃນຍຸກປະຈຸບັນທີ່ມີການແຂ່ງຂັ້ນສູງ.

ຜົນການວິໄຈສາມາດສະຫຼຸບວ່າ: ໂມເດລຕົວແບບເຊີງປະຈັກ (Empirical Data) ກັບຕົວແບບທາງທິດສະດີ (ໂມເດລຕົ້ນແບບ) ມີຄວາມສອດຄ່ອງກັນ ເຊິ່ງຜ່ານເກນການປະເມີນໂມເດລ ທີ່ເອີ້ນວ່າ: Model Fit ດັ່ງນີ້:

- ຄ່າອົງສາອິດສະຫຼະ (DF) ເທົ່າກັບ 43
- ຄ່າໄຄສແຄສໍາພັນ $\chi^2/df$ ເທົ່າກັບ 1.891
- ຄ່າວັດສະນີວັດຄວາມກົມກືນ (GFI) ເທົ່າກັບ 0.921
- ຄ່າດັສະນີວັດຄວາມສອດຄ່ອງກົມກືນປຽບທຽບ (CFI) ເທົ່າກັບ 0.912
- ດັດສະນີຮາກທີ່ສອງຂອງຄ່າສະເລ່ຍກໍາລັງສອງຂອງສ່ວນທີ່ເຫຼືອ (RMR) ເທົ່າກັບ 0.035
- ດັດສະນີຄວາມຄາດເຄື່ອນໃນການປະມານຄ່າພາລາມິເຕີ (RMSEA) ເທົ່າກັບ 0.075.

## 6. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). ວິໄສທັດຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020. ນະຄອນຫຼວງວຽງຈັນ.

ຄະນະສຶກສາສາດ. (2015). ຍຸດທະສາດການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ 10 ປີ (2016-2025). ນະຄອນຫຼວງພະບາງ.

ຄໍາມີ ວ່າງ. (2019). ສະຖິຕິ 2. ນະຄອນຫຼວງພະບາງ: ມະຫາວິທະຍາໄລ ສຸພານຸວົງ.

ຫ້ອງການວິຊາການ ມສ. (2019). ໜັງສືລາຍງານສະຖິຕິນັກສອບເສັງ ສົກສຶກສາ ແຕ່ປີ 2015-2019 ສະບັບເລກທີ 441/ມສ.ວກ. ມະຫາວິທະຍາໄລ ສຸພານຸວົງ.

ຈິດຕິຣັດ ແສງເສີກອຸໄທ. (ພສ. 2557). ປັດໄຈສິ່ງຜົນຕໍ່ແຮງຈູງໃຈໃນການສຶກສາຕໍ່ສາຂາວິຊາຊີບຄູຂອງນັກສຶກສາຊັ້ນປີທີ 1 . *ມະຫາວິທະຍາໄລລາຊະພັດນະຄອນປະຖົມ.*

ສີສະຫວາດ ໄຈປໍຖໍ່ ແລະ ວັນພອນ ຈິດນະວັນ. (2015). ສຶກສາປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈເຂົ້າສຶກສາ ຢູ່ໃນຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ຂອງນັກສຶກສາປີທີ 1 ສົກສຶກສາ 2014 - 2015. *ສາຂາຄູຄະນິດສາດ ພາກວິຊາຄູວິທະຍາສາດທໍາມະຊາດ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.*

ສີສະຫວາດ ໄຈປໍທໍ່ ແລະ ວັນພອນ ຈິດນະວັນ. (2015). ການສົ່ງເສີມ ແລະ ຮັກສາສິ່ງແວດລ້ອມ. *ສາຂາຄູຄະນິດສາດ ພາກວິຊາຄູວິທະຍາສາດທໍາມະຊາດ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ.*

ສຸດທິວົງ, ຈ. (ພສ 2559). *ຂະບວນຂອງການຕັດສິນໃຈ.* ຄະນະມະນຸດສາດ ແລະ ສັງຄົມສາດ ມະຫາວິທະຍາໄລລາຊະພັດອຸດົມບັກດິດ.

ສຸພານີ ສະຖົມວານິນ. (ພສ. 2549). *ຄວາມໝາຍການຕັດສິນໃຈ.* ຄະນະມະນຸດສາດ ແລະ ສັງຄົມສາດ ມະຫາວິທະຍາໄລລາຊະພັດອຸດົມບັກດິດ.

ສຸພັດຣາ. (ພສ. 2553). *ຄ່ານິຍົມ.* ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລລາຊະມຸງຄຸນລັດບູຣີ.

ສຸໂຂໄທ ທຳມະລິຊາ. (ພສ. 2558). *ຄວາມໝາຍການຕັດສິນໃຈ*. ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລລາຊະມຸງຄຸນລັດບູຣີ.

ດວງຮັດໄທ ແກ້ວຄຳ. (ຄສ. 2556). ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈເລືອກເຂົ້າສຶກສາຕໍ່ລະດັບປະລິນຍາຕີຂອງນັກສຶກສາມະຫາວິທະຍາໄລໃນເຂດດຸສິດ. *ຄະນະເທດໂນໂລຢີສື່ສານມວນຊົນ ມະຫາວິທະຍາໄລລາຊະມຸງຄຸນພຣະນະຄອນ.*

ທອງຄຸນ ຫົງພັນ. (ພສ. 2542). *ຄວາມໝາຍຂອງຫຼັກສູດ*. ມະນຸດສາດ ແລະ ສັງຄົມສາດ. ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລນານາຊາດຊາຕິ.

ຝວງພອນ ເກດພິທັກ. (ພສ. 2548). *ນິໄສໃນການຮຽນຮູ້*. Retrieved from http://sumrej.com.

Athapol Ruangkanjanases, Chenin Chen . (2014). Factors Affecting Chinese Students' Decision Making toward Thai Universites. *Chulalongkorn University*.

Osman Zain, Andy Ibrahim, Muhammad Tahir Jan. (2013). Factors Influencing Students' Decisions in Choosing Private Institutions of Higher Education in Malaysia: A Structural Equation Modelling Approach. *International Islamic University Malaysia (IIUM)*, 75-90.

Rahmat Hidayat, Sekolah Tinggi Ilmu Manajemen Sukma Effendi Sinuhaji. (2018). Factors That Affect Students Decision to Choose Private Universities in Medan City Indonesia. *Academy of Strategic Management Journal, 17*(6.2018).

Sasithorn Thanarin. (ພສ 2554). ການສຶກສາປັດໄຈທີມີຜົນຕໍ່ການເລືອກສຶກສາຕໍ່ໃນມະຫາວິທະຍາໄລ ລາດຊະພັດ ຊຸນບູລີ. *ມະຫາວິທະຍາໄລ ລາດສະລາດສຳໜັກວິທະຍາວິຊາການ.*